## ກະຊວງກະສິກຳ ແລະ ສິ່ງແວດລ້ອມ

**ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ**

ເງິນກູ້ເລກທີ: IDA No.673580-LA ແລະ IDA No.73590-LA, ລະຫັດໂຄງການ. P178545

**ປະກາດຮັບສະໝັກພະນັກງານ** - Request for Expression of Interest (REOI)

ຕຳແໜ່ງ: **ພະນັກງານ ດ້ານການປັບໂຕກັບການປ່ຽນແປງດິນຟ້າອາກາດ ຂັ້ນບ້ານ** ຈຳນວນ 20 ຕຳແໜ່ງ, ປະຈຳຢູ່ກຸ່ມບ້ານເປົ້າໝາຍ ຂອງໂຄງການ ປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ແຕ່ລະເມືອງ ພ້ອມທັງເດີນທາງໄປປະຕິບັດໜ້າທີ່ຢູ່ບ້ານເປົ້າໝາຍທີ່ຂຶ້ນກັບກຸ່ມບ້ານເປົ້າໝາຍ ຂອງໂຄງການ ເປັນປະຈຳ.

ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ແລະ ໄດ້ຮັບທຶນຊ່ວຍເຫຼືອລ້າຈາກ ອົງການເພື່ອການພັດທະນາ ແລະ ການຮ່ວມມື ແຫ່ງປະເທດສະວິດສແລນ (ອົງການ SDC) ເພື່ອຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການວ່າຈ້າງພະນັກງານ ໂຄງການ.

ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນຜູ້ທີ່ສົນໃຈ ທີ່ມີຄຸນວຸດທິຄົບຖ້ວນຖືກຕ້ອງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຂ້າງລຸ່ມ ຍື່ນເອກະສານສະໝັກດ້ວຍຕົນເອງ ຢູ່ທີຫ້ອງການ ປຊກ ເມືອງ ທີ່ກຳລັງປະກາດຮັບສະໝັກ ຫຼື ສົ່ງທາງອີເມວ ສົ່ງມາຕາມທີ່ຢູ່ Email: **info.hr@clearlaos.org** ພ້ອມເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນບ່ອນອ້າງອີງ ດ້ານຄວາມຮູ້, ຄວາມສາມາດ ແລະ ປະສົບການ ການເຮັດວຽກຜ່ານມາ ທີ່ກ່ຽວຂ້ອງຂອງທ່ານ ເພື່ອຈະມາມາຮັບຜິດຊອບວຽກງານດັ່ງກ່າວ ລາຍລະອຽດມີດັ່ງລຸ່ມນີ້:

- ຕຳແໜ່ງ: **ພະນັກງານ ດ້ານການປັບໂຕກັບການປ່ຽນແປງດິນຟ້າອາກາດ ຂັ້ນບ້ານ** ຈຳນວນ 20 ຕຳແໜ່ງ ປະຈຳຢູ່ກຸ່ມບ້ານເປົ້າໝາຍ ຂອງໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຕາມແຕ່ລະເມືອງດັ່ງນີ້:

  I. ແຂວງ ຜົ້ງສາລີ
  - ເມືອງ ຜົ້ງສາລີ 4 ຕຳແໜ່ງ;
  - ເມືອງ ຍອດອູ 3 ຕຳແໜ່ງ;

  II. ແຂວງ ອຸດົມໄຊ
  - ເມືອງ ງາ 4 ຕຳແໜ່ງ;
  - ເມືອງ ປາກແບງ 3 ຕຳແໜ່ງ;

  III. ແຂວງ ຊຽງຂວາງ
  - ເມືອງ ໜອງແຮດ 3 ຕຳແໜ່ງ;
  - ເມືອງ ພູກູດ 3 ຕຳແໜ່ງ;

1. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນຜູ້ທີ່ສົນໃຈ ທີ່ມີຄຸນວຸດທິຄົບຖ້ວນຖືກຕ້ອງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຂ້າງລຸ່ມ ***ຍື່ນເອກະສານສະໝັກດ້ວຍຕົນເອງ*** ທາງອີເມວ ສົ່ງມາຕາມທີ່ຢູ່ Email: **info.hr@clearlaos.org** ນີ້ພ້ອມເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນບ່ອນອ້າງອີງດ້ານ ປະສົບການດ້ານຄວາມຮູ້, ຄວາມສາມາດ ແລະ ປະສົບການດ້ານວຽກງານຜ່ານມາ ຂອງທ່ານ ເພື່ອມາຮັບຜິດຊອບເຮັດວຽກດັ່ງກ່າວ:

- ຂໍ້ກຳນົດເງື່ອນໄຂເບື້ອງຕົ້ນ ຂອງຜູ້ສະໝັກທີ່ສາມາດຍື່ນສະໝັກໄດ້ ປະກອບມີດັ່ງນີ້:
  - ລະດັບທາງດ້ານການສຶກສາ: ຢ່າງນ້ອຍມີປະກາສະນີຍະບັດ ຊັ້ນສູງ ດ້ານການຄຸ້ມຄອງສິ່ງແວດລ້ອມ, ກະສິກຳ, ການປາມົງ/ສັດນໍ້າ, ປ່າໄມ້, ການຄຸ້ມຄອງນໍ້າ ຫຼື ຂະແໜງການອື່ນໆທີ່ກ່ຽວຂ້ອງ;
  - ມີປະສົບການຕົວຈິງຢ່າງໜ້ອຍ 1 ປີ ດ້ານພັດທະນາຊຸມຊົນ ລວມທັງການເຮັດວຽກຮ່ວມກັບ ອຳນາດການປົກຄອງທ້ອງຖິ່ນ, ແມ່ຍິງ ແລະ ຊົນເຜົ່າ;
  - ປະສົບການຕົວຈິງດ້ານການປັບໂຕກັບການປ່ຽນແປງດິນຟ້າອາກາດໂດຍນຳໃຊ້ລະບົບນິເວດວິທະຍາ ແລະ/ຫຼື ການຄຸ້ມຄອງນໍ້າແບບປະສົມປະສານ ຈະໄດ້ຮັບການພິຈາລະນາເປັນພິເສດ;
  - ມີທັກສະຂັ້ນພື້ນຖານ ກ່ຽວກັບ ການນຳໃຊ້ຄອມພິວເຕີ້ ລວມທັງມີຄວາມສາມາດໃນການນຳໃຊ້ລະບົບໄມໂຄຣຊອບອອບຟິດ (ເວີດ ແລະ ເອັກແຊວ);
  - ມີທັກສະດ້ານການສື່ສານໃນລະດັບດີ, ມີຄວາມຮູ້ດ້ານພາສາຊົນເຜົ່າທີ່ຊຸມຊົນເປົ້າໝາຍນຳໃຊ້ ຈະໄດ້ຮັບການພິຈາລະນາເປັນພິເສດ;
  - ມີຄວາມພ້ອມ ແລະ ຄວາມສາມາດໃນການເຮັດວຽກກັບທີ່ປຶກສາພາຍໃນ ແລະ ຕ່າງປະເທດ;
  - ມີຄວາມຮູ້ດ້ານພື້ນທີ່ຂອງບ້ານເປົ້າໝາຍ;
  - ສາມາດເດີນທາງ ແລະ ພັກເຊົາຢູ່ບ້ານເປົ້າໝາຍໄດ້.

- ເອກະສານຍື່ນສະໝັກ ປະກອບມີ:
  - ໃບຄຳຮ້ອງຍື່ນສະໝັກງານ: ໃຫ້ລະບຸລະອຽດຊື່ຕຳແໜ່ງທີ່ສະໝັກ, ສະຖານທີ່ຫ້ອງການ ທີ່ສະເໜີເຂົ້າປະຈຳການ. ພ້ອມທັງລະບຸປະສົບການຜ່ານມາທີ່ຄ້າຍຄືກັບວຽກທີ່ຍື່ນສະໝັກ, ລາຍຊື່ ແລະ ເບີໂທລະສັບ ຂອງຜູ້ທີ່ສາມາດຢັ້ງຢືນໃຫ້ທ່ານ ແລະ ທາງໂຄງການສາມາດສອບຖາມໄດ້ ປະມານ 3 ທ່ານ;
  - ຊີວະປະຫວັດຂອງຜູ້ຍື່ນສະໝັກ ພ້ອມຮູບຖ່າຍ (ລະບຸລະອຽດ ກ່ຽວກັບລະດັບການສຶກສາ ແລະ ປະສົບການເຮັດວຽກຜ່ານມາ);
  - ສຳເນົາໃບປະກາດຈົບການສຶກສາ ແລະ ໃບຄະແນນ, ໃບຢັ້ງຢືນຜ່ານການຝຶກອົບຮົມຕ່າງໆ;
  - ສຳເນົາໃບຢັ້ງຢືນການເຮັດວຽກຜ່ານມາ ວຽກທີ່ຄ້າຍຄືກັບວຽກນີ້, ໃບແຈ້ງໂທດ, ໃບຢັ້ງຢືນທີ່ຢູ່, ບັດປະຈຳຕົວ, ໃບອະນຸຍາດຂັບຂີ່.

2. ຂໍ້ມູນເພີ່ມເຕີມ ລວມທັງຂໍ້ກຳນົດເງື່ອນໄຂການອ້າງອີງຕ່າງໆ ທ່ານສາມາດພົວພັນເອົາໄດ້ ໃນເວລາເຮັດວຽກ ນັບແຕ່ເວລາ 08:00 ໂມງ ຫາ 16:00 ໂມງ, ແຕ່ວັນຈັນ ເຖິງ ວັນສຸກ ທີ່ຫ້ອງການ ປຊກ ສູນກາງ, ຕັ້ງຢູ່ໃນຫ້ອງວ່າການລັດຖະບານ, ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ໂທ: 021 261 479 - 80 ຕໍ່ 105 ຫລື ເຂົ້າເບິ່ງໃນເວັບໄຊ້ ຂອງໂຄງການໄດ້ທີ່: http://www.clearlaos.org/vacancy.

3. ເອກະສານຍື່ນສະໝັກ ຕ້ອງສົ່ງເປັນລາຍລັກອັກສອນ ດ້ວຍຕົນເອງ ສົ່ງທາງອີເມວ ທີ່ຢູ່: **info.hr@clearlaos.org** ຫ້ອງການໂຄງການ ປຊກ ຈະພົວພັນຫາຜູ້ທີ່ຖືກຄັດເລືອກທີ່ເໝາະສົມທີ່ສຸດ ທາງອີເມວ ພາຍຫລັງທີ່ໄດ້ຮັບອະນຸມັດເປັນທາງການ ຈາກຜູ້ໃຫ້ທຶນ, **ວັນທີປິດຮັບເອກະສານຍື່ນສະໝັກ ແມ່ນວັນທີ 22 ເມສາ 2026.**

ນະຄອນຫລວງວຽງຈັນ, ວັນທີ 25 ມີນາ 2026

ຮກ. ຜູ້ອຳນວຍການ

ປອ. ວົງປະພັນ ມະນີວົງ